**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລສຸພານຸວົງ ເລກທີ.116./ມສ

ຫຼວງພະບາງ, ວັນທີ 25 ເມສາ 2021

# ແຈ້ງການ

ເຖິງ : ຄະນະບໍດີ, ຫົວໜ້າຫ້ອງການ, ຜູ້ອຳນວຍການຫໍສະໝຸດ, ສູນ, ສະຖາບັນ ແລະ ນັກສຶກສາ ພາຍໃນ ມະຫາວິທະຍາໄລ ສຸພານຸວົງ.

ເລື່ອງ: ການໂຈະການຮຽນ-ການສອນຊົ່ວຄາວ.

- ອີງຕາມ ຄຳສັ່ງເພີ່ມເຕີມຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 428/ສສກ, ລົງວັນທີ 23 ເມສາ 2021.
- ອີງຕາມ ຄຳສັ່ງຂອງທ່ານເຈົ້າແຂວງ ແຂວງຫຼວງພະບາງ ສະບັບເລກທີ 01/ຈຂ. ຫຼບ, ລົງວັນທີ 24 ເມສາ 2021.

ສະພາບການລະບາດຂອງພະຍາດໂຄວິດ-19 ຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ກວມເອົາທຸກປະເທດໃນທົ່ວໂລກ, ຈຳນວນຜູ້ຕິດເຊື້ອ ແລະ ເສຍຊີວິດຈາກພະຍາດດັ່ງກ່າວຍັງເພີ່ມຂຶ້ນຢ່າງຕໍ່ເນື່ອງຢູ່ໃນປະເທດໃກ້ຄຽງຂອງພວກເຮົາ ແລະ ປັດຈຸບັນພະຍາດດັ່ງກ່າວໄດ້ມີການລະບາດຢູ່ພາຍໃນ ສປປ ລາວ ໂດຍສະເພາະນະຄອນຫຼວງວຽງຈັນ ແລະ ບັນດາແຂວງຕ່າງໆ ພາຍໃນປະເທດ. ສະນັ້ນ, ເພື່ອເປັນການສະກັດກັ້ນພະຍາດດັ່ງກ່າວບໍ່ໃຫ້ມີການແຜ່ລະບາດໃນ ມສ.

**ອະທິການບໍດີ ມະຫາວິທະຍາໄລ ສຸພານຸວົງ ອອກແຈ້ງການໃຫ້ພະນັກງານ ແລະ ນັກສຶກສາປະຕິບັດດັ່ງນີ້:**

1. ໃຫ້ບັນດາຄະນະວິຊາໂຈະການຮຽນ-ການສອນຊົ່ວຄາວແຕ່ວັນທີ **25 ເມສາ 2021 ເຖິງ 05 ພຶດສະພາ 2021** ຈົນກວ່າຈະມີແຈ້ງການປ່ຽນແປງຂອງລັດຖະບານ, ກະຊວງສຶກສາທິການ ແລະ ກິລາ ກໍ່ຄືແຈ້ງການປ່ຽນແປງຂອງທ່ານເຈົ້າແຂວງ ແຂວງຫຼວງພະບາງ.
2. ໃຫ້ພະນັກງານ-ອາຈານພາຍໃນຄະນະວິຊາ, ຫ້ອງການ, ສູນ, ສະຖາບັນ ແລະ ຫໍສະໝຸດຈັດຕາຕະລາງຜັດປ່ຽນກັນມາປະຈຳການ ໂດຍໃຫ້ສົ່ງຕາຕະລາງເວນຍາມ ແລະ ປະຈຳການໃຫ້ແກ່ຫ້ອງການບໍລິຫານ-ສັງລວມ.

สแกนด้วย CamScanner

3. ຫ້າມບໍ່ໃຫ້ນັກສຶກສາທີ່ນອນພາຍໃນຫໍພັກອອກໄປເຄື່ອນໄຫວ ຫຼື ໄປພາລະກິດຂ້າງນອກ, ຖ້າມີຄວາມຈຳເປັນຕ້ອງໄດ້ຮັບການອະນຸຍາດຈາກຫ້ອງການຄຸ້ມຄອງນັກສຶກສາສາກ່ອນ ແລະ ພາຍຫຼັງການມາຫໍພັກໃຫ້ຫ້ອງການຄຸ້ມຄອງນັກສຶກສາວັດແທກອຸນຫະພູມກ່ອນຈຶ່ງສາມມາດເຂົ້າຫໍພັກໄດ້.
4. ຫ້າມບໍ່ໃຫ້ພະນັກງານ-ອາຈານ ແລະ ນັກສຶກສາໂຮມຊຸມນຸມກັນເກີນ 20 ຄົນ ແລະ ຮັກສາໄລຍະຫ່າງ.
5. ມອບໃຫ້ພະແນກປ້ອງກັນ ມສ ຈຶ່ງຈັດຕັ້ງເວນຍາມການເຂົ້າ-ອອກ ມສ ຢ່າງເຄັ່ງຄັດ.
6. ມອບໃຫ້ໜ່ວຍງານແພດ ມສ ຈັດຕັ້ງຈຸດວັດແທກອຸນຫະພູມໃຫ້ແກ່ພະນັກງານ-ອາຈານ ແລະ ນັກສຶກສາໃນການເຂົ້າ-ອອກ ມສ ຢ່າງເຄັ່ງຄັດ.
7. ໃຫ້ພະນັກງານ-ອາຈານ ແລະ ນັກສຶກສາທົ່ວມະຫາວິທະຍາໄລ ສຸພານຸວົງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຈາມແຈ້ງການສະບັບນີ້ຢ່າງເຂັ້ມງວດຈົນກວ່າຈະມີແຈ້ງການປ່ຽນແປງຂອງຂັ້ນເທິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດດ້ວຍ.

ອະທິການບໍດີ

ຮສ. ປທ. ວິໄຊ ຈັນສະຫວ່າງ

สแกนด้วย CamScanner